ລາວ Laotian

ຂໍ້ກຳນົດດ້ານການ ບໍລິການອາຫານ

ການນຳກັບມາໃຊ້ຄືນໃໝ່: ບໍ່ອະນຸຍາດໃຫ້ທຸລະກິດໃນເມືອງຊີແອັດເທິລ ຖິ້ມສິ່ງຂອງທີ່ສາມາດນຳກັບມາໃຊ້ຄືນໃໝ່ໄດ້ໃສ່ຂີ້ເຫຍື້ອ.

ການຍ່ອຍສະຫຼາຍ: ບໍ່ອະນຸຍາດໃຫ້ທຸລະກິດໃນເມືອງຊີແອັດເທິລ ຖິ້ມສິ່ງຂອງທີ່ສາມາດຍ່ອຍສະຫຼາຍເປັນປຸ໋ຍໄດ້ໃສ່ຂີ້ເຫຍື້ອ.

ການບັນຈຸພັນ: ທຸລະກິດໃນເມືອງຊີແອັດເທິລ ຕ້ອງໃຊ້ບັນຈຸພັນອາຫານ ແລະ ເຄື່ອງດື່ມທີ່ສາມາດຍ່ອຍສະຫຼາຍ ຫຼື ສາມາດ ນຳກັບມາໃຊ້ຄືນໃໝ່ໄດ້.

ບໍ່ອະນຸຍາດໃຫ້ມີສິ່ງທີ່ສາມາດນຳກັບມາໃຊ້ຄືນໃໝ່ຢູ່ໃນຂີ້ເຫຍື້ອ: ປະມວນກົດລະບຽບເທດສະບານເມືອງຊີແອັດເທິລ (21.36.083)

ກຳນົດໃຫ້ທຸລະກິດທຸກພາກສ່ວນແຍກເຈ້ຍ, ເຈ້ຍແຂງ, ຂວດ ແລະ ໂຖທີ່ເປັນແກ້ວ, ຈອກປລັສຕິກ ແລະ ເຈ້ຍ, ຂວດ ແລະ ໂຖທີ່ເປັນປລັສຕິກ, ກະປ໋ອງອາລູມິນຽມ ແລະ ກ໋ວ, ແລະ ສິ່ງເສດເຫຼືອຈາກເດີ່ນບ້ານ ອອກຈາກຂີ້ເຫຍື້ອ. ບໍ່ອະນຸຍາດໃຫ້ມີສິ່ງເຫຼົ່ານີ້ຢູ່ໃນຂີ້ເຫຍື້ອ (ມີຜົນຕັ້ງແຕ່ວັນທີ 1 ກໍລະກົດ 2014).

ບໍ່ອະນຸຍາດໃຫ້ມີອາຫານຢູ່ໃນຂີ້ເຫຍື້ອ: ປະມວນກົດລະບຽບເທດສະບານເມືອງຊີແອັດເທິລ (21.36.082)

ກຳນົດໃຫ້ທຸລະກິດທຸກພາກສ່ວນແຍກອາຫານ ແລະ ເຈ້ຍທ່ອ໋ອາຫານແບບບໍ່ໄດ້ເຄືອບທີ່ປົນເປື້ອນທັງໝົດ ເຊັ່ນວ່າ ເຈ້ຍເຊັດມື, ຜ້າເຊັດທີ່ເປັນເຈ້ຍ ແລະ ກ່ອງພິດຊ້າ ອອກຈາກຂີ້ເຫຍື້ອ. ບໍ່ອະນຸຍາດໃຫ້ມີສິ່ງເຫຼົ່ານີ້ຢູ່ໃນຂີ້ເຫຍື້ອ (ມີຜົນແຕ່ວັນທີ 1 ມັງກອນ 2015).

ຄຳສັ່ງກ່ຽວກັບບັນຈຸພັນອາຫານ: ປະມວນກົດລະບຽບເທດສະບານເມືອງຊີແອັດເທິລ (21.36.086)

1. **ກິນຢູ່ໃນຮ້ານ:** ຮ້ານອາຫານ ແລະ ທຸລະກິດບໍລິການອາຫານທີ່ຂາຍ ຫຼື ສະໜອງອາຫານຢູ່ໃນກ່ອງບັນຈຸແບບໃຊ້ທີ່ຖິ້ມ ແມ່ນຖືກກຳນົດໃຫ້ ໃຊ້ ອັດສະດຸທີ່ສາມາດຍ່ອຍສະຫຼາຍໄດ້ສຳລັບການບໍລິການອາຫານນັ້ນ. ອາດຈະໃຊ້ພະລັງຕະພັນປລັສຕິກ ຫຼື ເຈ້ຍທີ່ເຄືອບປລັສຕິກ ສຳລັບ ການ ບໍລິການຈັດຕຽມອາຫານ ພຽງແຕ່ຖ້າຫຼັງຈາກການໃຊ້ພວກມັນມີຄວາມສະອາດພຽງພໍທີ່ຈະເກັບເອົາມານຳໃຊ້ຄືນໃໝ່.
2. **ຫໍ່ກັບບ້ານ:** ອັດສະຫຸ້ມຫ່ໍ່ອາດຈະເປັນແບບນຳກັບມາໃຊ້ຄືນໃໝ່ ຫຼື ແບບຍ່ອຍສະຫຼາຍໄດ້ສຳລັບການບໍລິການແບບຫ່ໍ່ອາຫານກັບບ້ານ. (ມີຜົນແຕ່ວັນທີ 1 ກໍລະກົດ, 2010).
3. **ຫ້າມ:** ຫ້າມບໍ່ໃຫ້ບັນດາທຸລະກິດໃຊ້ອັດສະດຸຫຸ້ມຫ່ໍ່ທີ່ເປັນໂຟມປລັສຕິກ (Styrofoam™). (ມີຜົນແຕ່ວັນທີ 1 ມັງກອນ 2009).

ການຮັກສາໃຫ້ອັດສະດຸທີ່ສາມາດນຳກັບມາໃຊ້ໃໝ່ໄດ້ ແລະ ຍ່ອຍສະຫຼາຍໄດ້ຢູ່ນອກສະຖານທີ່ຝັງຂີ້ເຫຍື້ອ ຈະຊ່ວຍຫຼຸດສິ່ງເສດເຫຼືອ ແລະ ມົນລະພິດ. ໂດຍການປ່ຽນມາໃຊ້ ອັດສະດຸຫຸ້ມຫ່ໍ່ທີ່ນຳກັບມາໃຊ້ໃໝ່ໄດ້ ຫຼື ຍ່ອຍສະຫຼາຍໄດ້, ບັນດາທຸລະກິດສາມາດຫຼຸດການບໍລິການກຳຈັດຂີ້ເຫຍື້ອຂອງເຂົາເຈົ້າ ແລະ ປະຢັດເງິນໄດ້. ການໃຊ້ພາຊະນະບັນຈຸ ທີ່ສາມາດຍ່ອຍສະຫຼາຍໄດ້ເທົ່ານັ້ນ ເຮັດໃຫ້ທຸລະກິດມີຄວາມສະດວກໃນການກຳຈັດຖິ້ມດ້ວຍຂັ້ນຕອນດຽວທີ່ງ່າຍດາຍໃສ່ຖັງເກັບສິ່ງທີ່ສາມາດຍ່ອຍສະຫຼາຍໄດ້.

ຕິດຕໍ່ຫາໂຄງການທຸລະກິດສີຂຽວຂອງ Seattle Public Utilities ເພື່ອຂໍຄວາມຊ່ວຍເຫຼືອ ແລະ ຊັບພະຍາກອນຟຣີສຳລັບການປະຕິບັດຕາມຄຳສັ່ງເຫຼົ່ານີ້.

For interpretation services, please call 206-684-3000.
如需要口譯服務，請撥電話號碼 206-684-3000.
통역 서비스를 원하시면 206-684-3000. 으로 전화하세요.
Wixii turjubaan afka ah ku saabsan, Fadlan la soo xariir taleefoonka: 206-684-3000.
Para servicios de interpretación por favor llame al 206-684-3000.
Para sa serbisyo ng tagapagpaliwanag, tumawag sa 206-684-3000.
Vè dịch vụ phiên dịch xin gọi 206-684-3000.

Seattle Public Utilities

greenbusiness@seattle.gov www.seattle.gov/util/GreenYourBusiness 206-343-8505

FC2/3-15

ທຸລະກິດການບໍລິການອາຫານ

ລາວ Laotian

ແຫຼ່ງຄວາມຊ່ວຍເຫຼືອຟຣີ

ຂໍຄຳໂປສເຕີ ແລະ ປ້າຍຕິດຖັງຂີ້ເຫຍື້ອຟຣີ ຫຼື ສ້າງໂປສເຕີ້ຂອງທ່ານເອງໄດ້ທີ່ www.seattle.gov/util/ForBusinesses/SolidWaste/FoodYardBusinesses/Commercial/WastePosterOrderForm.

ພື້ນທີ່ຮັບປະທານອາຫານໃນຮ້ານອາຫານ (ຊຸດສາມຢ່າງ)

ສິ່ງສະໝົມໃນເຮືອນຄົວຂອງຮ້ານອາຫານ (ມີຫຼາຍພາສາ)

ປ້າຍຕິດຖັງເກັບຂີ້ເຫຍື້ອ

ຜູ້ໃຫ້ບໍລິການເກັບຂີ້ເຫຍື້ອ

RECOLOGY CLEANSCAPES	WASTE MANAGEMENT	REPUBLIC	CEDAR GROVE	SEADRUNAR
ຂີ້ເຫຍື້ອ | ນ້ຳກັບມາໃຊ້ໃໝ່ | ຍ່ອຍສະຫຼາຍ	ຂີ້ເຫຍື້ອ | ນ້ຳກັບມາໃຊ້ໃໝ່ | ຍ່ອຍສະຫຼາຍ	ນ້ຳກັບມາໃຊ້ໃໝ່ | ຍ່ອຍສະຫຼາຍ	ນ້ຳກັບມາໃຊ້ໃໝ່ | ຍ່ອຍສະຫຼາຍ	ນ້ຳກັບມາໃຊ້ໃໝ່
206-250-7500	800-592-9995	206-332-7777	877-994-4466	206-467-7550
info@recologycleanscapes.com	recyclenw@wm.com	infoseattle@republicservices.com	help@cgcompost.com	info@seadrunarrecycling.com

ຂໍ້ມູນຜູ້ໃຫ້ບໍລິການ

ຕິດຕໍ່ຫາໂຄງການທຸລະກິດສີຂຽວຂອງ Seattle Public Utilities ສຳລັບຂໍ້ມູນກ່ຽວກັບການບັນຈຸພັນ, ຖັງຂີ້ເຫຍື້ອ ແລະ ການບໍລິການ.

ບັນຈຸພັນ

ລາຍຊື່ຕິດຕໍ່ສຳລັບຜູ້ສະໜອງ ແລະ ຜູ້ຜະລິດບັນຈຸພັນທີ່ສາມາດຍ່ອຍສະຫຼາຍໄດ້ ແລະ ນຳກັບມາໃຊ້ໃໝ່ໄດ້.

ຖັງໃສ່ຂີ້ເຫຍື້ອ

ລາຍຊື່ຕິດຕໍ່ສຳລັບຜູ້ສະໜອງ ແລະ ຜູ້ຜະລິດຖັງໃສ່ຂີ້ເຫຍື້ອພາຍໃນອາຄານ.

ການບໍລິການເກັບຂີ້ເຫຍື້ອ

ລາຍຊື່ຕິດຕໍ່ສຳລັບຜູ້ໃຫ້ບໍລິການເກັບຂີ້ເຫຍື້ອທີ່ຍ່ອຍສະຫຼາຍໄດ້ ແລະ ສາມາດນຳກັບມາໃຊ້ຄືນໃໝ່ໄດ້.

greenbusiness@seattle.gov **www.seattle.gov/util/GreenYourBusiness** **206-343-8505**

FC2/3-15